ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

# ບົດລາຍງານສະຖິຕິເງິນຕາ

## ປະຈຳໄຕມາດ ທີ 3 ຂອງປີ 2020

ທະນາຄານແຫ່ງ ສປປ ລາວ

# ສາລະບານ

I. ສະພາບລວມ ........ 1
II. ອັດຕາເງິນເຟີ້ ........ 1
III. ຂະແໜງເງິນຕາ-ການເງິນ ........ 2
3.1. ນະໂຍບາຍເງິນຕາ ........ 2
3.2. ຖານເງິນຕາ ........ 2
3.3. ປະລິມານເງິນ ........ 3
3.4. ອັດຕາແລກປ່ຽນ ........ 3
3.5. ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ........ 4
3.6. ອັດຕາດອກເບ້ຍ ........ 4
3.7. ເງິນຝາກ ........ 4
3.8. ສິນເຊື່ອ ........ 5
3.9. ຕະຫຼາດຫຼັກຊັບ ........ 5
IV. ດຸນການຊໍາລະກັບຕ່າງປະເທດ ........ 7
4.1. ດຸນການຊໍາລະລວມ ........ 7
4.2. ດຸນບັນຊີຊໍາລະປົກກະຕິ ........ 7
4.2.1 ດຸນການຄ້າ ........ 8
4.3. ດຸນບັນຊີການເງິນ ........ 9

# ສາລະບານຮູບ

ຮູບທີ 1. ໂຄງປະກອບຂອງອັດຕາເງິນເຟີ້ ........ 1
ຮູບທີ 2. ການປະກອບສ່ວນ ຕໍ່ອັດຕາເງິນເຟີ້ລວມ ........ 2
ຮູບທີ 3. ໂຄງປະກອບຂອງຖານເງິນຕາ ........ 2
ຮູບທີ 4. ການຂະຫຍາຍຕົວຂອງປະລິມານເງິນ M2 ........ 3
ຮູບທີ 5. ການເໜັງຕີງຂອງອັດຕາແລກປ່ຽນ (ໄຕມາດທຽບໄຕມາດ) ........ 4
ຮູບທີ 6. ເງິນຝາກຂອງທະນາຄານທຸລະກິດ ........ 5
ຮູບທີ 7. ການປະກອບສ່ວນຂອງສິນເຊື່ອ (ແຍກຕາມຂະແໜງການ) ........ 5
ຮູບທີ 8. ດຸນການຊໍາລະກັບຕ່າງປະເທດ ........ 7
ຮູບທີ 9. ໂຄງປະກອບຂອງດຸນບັນຊີຊໍາລະປົກກະຕິ ........ 7
ຮູບທີ 10. ການສົ່ງອອກສິນຄ້າ ........ 8
ຮູບທີ 11. ການນໍາເຂົ້າສິນຄ້າ ........ 9
ຮູບທີ 12. ດຸນບັນຊີການເງິນ ........ 9

# ສາລະບານຕາຕະລາງ

ຕາຕະລາງທີ 1. ດັດຊະນີລາຄາຜູ້ຊົມໃຊ້ (ທຽບຖານເດືອນ 12/2015 = 100) ........ 10
ຕາຕະລາງທີ 2. ອັດຕາເງິນເຟີ້ (%) ........ 10
ຕາຕະລາງທີ 3. ຖານະການເງິນຂອງທະນາຄານແຫ່ງ ສປປ ລາວ (ຕື້ກີບ) ........ 11
ຕາຕະລາງທີ 4. ຖານະການເງິນຂອງທະນາຄານທຸລະກິດ (ຕື້ກີບ) ........ 12
ຕາຕະລາງທີ 5. ຖານະການເງິນຂອງລະບົບທະນາຄານ (ຕື້ກີບ) ........ 13
ຕາຕະລາງທີ 6. ຊັບສິນຂອງທະນາຄານທຸລະກິດ (ຕື້ກີບ) ........ 14
ຕາຕະລາງທີ 7. ອັດຕາແລກປ່ຽນທະນາຄານທຸລະກິດ ແລະ ຕະຫຼາດ ........ 15
ຕາຕະລາງທີ 8. ອັດຕາດອກເບ້ຍ (ຄິດເປັນສ່ວນຮ້ອຍຕໍ່ປີ) ........ 16
ຕາຕະລາງທີ 9. ເງິນຝາກຂອງທະນາຄານທຸລະກິດ (ຕື້ກີບ) ........ 17
ຕາຕະລາງທີ 10. ເງິນຝາກຂອງທະນາຄານທຸລະກິດ ແຍກຕາມກຸ່ມທະນາຄານ (ຕື້ກີບ) ........ 18
ຕາຕະລາງທີ 11. ສິນເຊື່ອຂອງທະນາຄານທຸລະກິດ (ຕື້ກີບ) ........ 19
ຕາຕະລາງທີ 12. ສິນເຊື່ອຂອງທະນາຄານທຸລະກິດ ແຍກຕາມກຸ່ມທະນາຄານ (ຕື້ກີບ) ........ 20
ຕາຕະລາງທີ 13. ດຸນການຊໍາລະກັບຕ່າງປະເທດ (ລ້ານໂດລາ) ........ 21
ຕາຕະລາງທີ 14. ການຄ້າຕ່າງປະເທດ (ລ້ານໂດລາ) ........ 23
ຕາຕະລາງທີ 15. ທີ່ຕັ້ງສໍານັກງານຂອງແຕ່ລະທະນາຄານທຸລະກິດ ........ 24

# ບົດນຳ

ໃນບົດລາຍງານສະຖິຕິເງິນຕາປະຈຳໄຕມາດ ແມ່ນການສັງລວມຂໍ້ມູນສະຖິຕິເງິນຕາ ຂອງຂະແໜງການທະນາຄານ ຊຶ່ງກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ໄດ້ເກັບກຳສັງລວມ ແລ້ວເຜີຍແຜ່ບົດລາຍງານສະຖິຕິເງິນຕານີ້ ທາງເວັບໄຊຂອງ ທຫລ ເພື່ອໃຫ້ສັງຄົມໄດ້ນຳໃຊ້ຕາມຄວາມຈຳເປັນ ແລະ ຕ້ອງການຂອງແຕ່ລະພາກສ່ວນ.

ເຖິງຢ່າງໃດກໍຕາມ, ມີບາງຂໍ້ມູນໃນບົດລາຍງານສະບັບນີ້ ຍັງເປັນຕົວເລກຄາດຄະເນເບື້ອງຕົ້ນ ແລະ ອາດມີການປັບປຸງຂໍ້ມູນຄືນ. ສະນັ້ນ, ຂ້າພະເຈົ້າຕາງໜ້າກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ ຈຶ່ງຂໍອະໄພມາຍັງທຸກໆທ່ານມານະທີ່ນີ້ດ້ວຍ. ພ້ອມນີ້, ຂໍຮັບເອົາຄຳຕິຊົມຕ່າງໆຈາກທ່ານຜູ້ຊົມໃຊ້ດ້ວຍຄວາມຈິງໃຈ ເພື່ອການປັບປຸງບົດລາຍງານສະຖິຕິເງິນຕາສະບັບຕໍ່ໄປ ໃຫ້ມີຄວາມສົມບູນຍິ່ງຂຶ້ນ.

**ຫົວໜ້າກົມນະໂຍບາຍເງິນຕາ**

ຄຳພຸດ ສິດທິລາດ

# I. ສະພາບລວມ

ໃນໄຕມາດ 3 ຂອງປີ 2020, ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ດໍາເນີນນະໂຍບາຍເງິນຕາ ໂດຍສືບຕໍ່ນໍາໃຊ້ເຄື່ອງມືທາງອ້ອມ ເປັນຕົ້ນແມ່ນເປັນຕົ້ນແມ່ນໄດ້ຮັກສາອັດຕາດອກເບ້ຍພື້ນຖານຂອງ ທຫລ ໃນລະດັບ 3% ຕໍ່ປີ, ຮັກສາອັດຕາສ່ວນເງິນແຮຝາກບັງຄັບໄວ້ໃນລະດັບ 4% ສໍາລັບເງິນກີບ ແລະ 8% ສໍາລັບເງິນຕາຕ່າງປະເທດ; ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນ ຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ດ້ວຍການກໍານົດອັດຕາແລກປ່ຽນອ້າງອີງປະຈໍາວັນ ເພື່ອເປັນບ່ອນອີງໃຫ້ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ, ສືບຕໍ່ຊຸກຍູ້ຕະຫຼາດເປີດ, ຕະຫຼາດລະຫວ່າງທະນາຄານ ແລະ ປະຕິບັດພາລະບົດບາດເປັນຜູ້ດັດສົມແຫຼ່ງສຸດທ້າຍ ຢ່າງເປັນປົກກະຕິ. ຜ່ານການຈັດຕັ້ງປະຕິບັດດີດັ່ງກ່າວ, ທຫລ ສາມາດຮັກສາສະເຖຍລະພາບເງິນຕາແຫ່ງຊາດໄດ້ ສະແດງອອກຄື: ອັດຕາເງິນເຟີ້ ຢູ່ໃນລະດັບ 5,19% ທຽບໃສ່ໄຕມາດຜ່ານມາ, ອັດຕາແລກປ່ຽນເງິນກີບທຽບເງິນໂດລາ ອ່ອນຄ່າ 1,99%; ປະລິມານເງິນ (M2) ເພີ່ມຂຶ້ນ 5,22%; ເງິນຝາກຂອງທະນາຄານທຸລະກິດ ເພີ່ມຂຶ້ນ 5,60%; ສິນເຊື່ອຂອງທະນາຄານທຸລະກິດ ຂະຫຍາຍຕົວ 0,70%; ຄັງສໍາຮອງເງິນຕາຕ່າງປະເທດສາມາດກຸ້ມການນໍາເຂົ້າໄດ້ 4,93 ເດືອນ. ນອກຈາກນີ້, ດ້ານການຄ້າກັບຕ່າງປະເທດ ມູນຄ່າການຄ້າ ບັນລຸ 2.804,58 ລ້ານໂດລາ. ໃນນັ້ນ, ມູນຄ່າການສົ່ງອອກ ບັນລຸ 1.558,62 ລ້ານໂດລາ, ເພີ່ມຂຶ້ນ 26,88% ແລະ ມູນຄ່າການນໍາເຂົ້າ 1.245,96 ລ້ານໂດລາ, ເພີ່ມຂຶ້ນ 1,17% ທຽບໃສ່ໄຕມາດຜ່ານມາ.

# II. ອັດຕາເງິນເຟີ້

ອັດຕາເງິນເຟີ້ໃນໄຕມາດ 3 ຂອງປີ 2020 ຢູ່ໃນລະດັບ 5,19% ຫຼຸດລົງຈາກລະດັບ 5,53% ໃນໄຕມາດ 2/2020. ປັດໄຈທີ່ເຮັດໃຫ້ອັດຕາເງິນເຟີ້ຫຼຸດລົງເລັກນ້ອຍ ເມື່ອທຽບກັບໄຕມາດຜ່ານມາ ແມ່ນຍ້ອນການເພີ່ມຂຶ້ນໃນຈັງຫວະທີ່ຫຼຸດລົງຂອງໝວດອາຫານ ແລະ ເຄື່ອງດື່ມບໍ່ແມ່ນເຫຼົ້າ ບວກກັບການຫຼຸດລົງຂອງໝວດຮ້ານອາຫານ ແລະ ໂຮງແຮມ; ແຕ່ເຖິງຢ່າງໃດກໍຕາມ, ລາຄາຂອງໝວດສິນຄ້າອື່ນໆ ແມ່ນປັບຕົວເພີ່ມຂຶ້ນ ທຽບໃສ່ໄຕມາດຜ່ານມາ ເປັນຕົ້ນແມ່ນໝວດຄົມມະນາຄົມ ແລະ ການຂົນສົ່ງ ເພີ່ມຂຶ້ນ ຈາກການປັບຂຶ້ນຂອງລາຄານໍ້າມັນເຊື້ອໄຟພາຍໃນ ພາຍຫຼັງທີ່ລາຄາໄດ້ຫຼຸດລົງຫຼາຍໃນໄຕມາດຜ່ານມາ.

**ຮູບທີ 1. ໂຄງປະກອບຂອງອັດຕາເງິນເຟີ້**




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

**ຮູບທີ 2. ການປະກອບສ່ວນ ຕໍ່ອັດຕາເງິນເຟີ້ລວມ**




**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

# III. ຂະແໜງເງິນຕາ-ການເງິນ

## 3.1. ນະໂຍບາຍເງິນຕາ

ໃນໄຕມາດ 3 ຂອງປີ 2020, ທຫລ ໄດ້ດຳເນີນນະໂຍບາຍເງິນຕາ ໂດຍສືບຕໍ່ນຳໃຊ້ເຄື່ອງມືທາງອ້ອມ ເປັນຕົ້ນແມ່ນໄດ້ຮັກສາອັດຕາດອກເບ້ຍພື້ນຖານຂອງ ທຫລ ໃນລະດັບ 3% ຕໍ່ປີ, ຮັກສາອັດຕາສ່ວນເງິນແຮຝາກບັງຄັບໄວ້ໃນລະດັບ 4% ສຳລັບເງິນກີບ ແລະ 8% ສຳລັບເງິນຕາຕ່າງປະເທດ; ຊຸກຍູ້ຕະຫຼາດເປີດ ແລະ ຕະຫຼາດລະຫວ່າງທະນາຄານ ແລະ ປະຕິບັດພາລະບົດບາດເປັນຜູ້ກູ້ດືມແຫຼ່ງສຸດທ້າຍຢ່າງເປັນປົກກະຕິ.

## 3.2. ຖານເງິນຕາ

ຮອດທ້າຍໄຕມາດ 3 ຂອງປີ 2020, ຖານເງິນຕາ ມີຍອດເຫຼືອ 31.175,11 ຕື້ກີບ, ເພີ່ມຂຶ້ນ 4,37% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 23,57% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດທີ່ເຮັດໃຫ້ຖານເງິນຕາເພີ່ມຂຶ້ນໃນໄຕມາດນີ້ ແມ່ນຍ້ອນ ທທກ ເພີ່ມທຶນຈົດທະບຽນ ແລະ ເງິນຝາກແຮບັງຄັບ ແລະ ທຫລ ຈັດຕັ້ງປະຕິບັດນະໂຍບາຍສິນເຊື່ອ ເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບຈາກພະຍາດໂຄວິດ-19.

**ຮູບທີ 3. ໂຄງປະກອບຂອງຖານເງິນຕາ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.3. ປະລິມານເງິນ

ປະລິມານເງິນ (M2) ມີຍອດທັງໝົດ 106.944,64 ຕື້ກີບ, ເພີ່ມຂຶ້ນ 5,22% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 18,13% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດຕົ້ນຕໍຍ້ອນກະແສເງິນລົງທຶນຈາກຕ່າງປະເທດໃນຂະແໜງການອຸດສາຫະກຳ, ການປ່ອຍສິນເຊື່ອໃຫ້ພາກສ່ວນເສດຖະກິດເພື່ອຊຸກຍູ້ການຜະລິດ ແລະ ແກ້ໄຂຜົນກະທົບຈາກພະຍາດໂຄວິດ-19.

ອົງປະກອບຂອງປະລິມານເງິນ ປະກອບມີ: ເງິນຝາກເປັນສະກຸນເງິນກີບ 41,72%, ເງິນຝາກເປັນສະກຸນເງິນຕາຕ່າງປະເທດ 50,75% ແລະ ເງິນຢູ່ນອກລະບົບທະນາຄານ 7,53% (ຮູບທີ 4).

**ຮູບທີ 4. ການຂະຫຍາຍຕົວຂອງປະລິມານເງິນ M2**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.4. ອັດຕາແລກປ່ຽນ

ທຫລ ໄດ້ສືບຕໍ່ປະຕິບັດນະໂຍບາຍອັດຕາແລກປ່ຽນ ຕາມກົນໄກຕະຫຼາດທີ່ມີການຄຸ້ມຄອງຂອງລັດ ເປັນເຄື່ອງມືຕົ້ນຕໍໃນການຮັກສາສະຖຽນລະພາບເງິນຕາແຫ່ງຊາດ ຄື: ສືບຕໍ່ກຳນົດອັດຕາແລກປ່ຽນອ້າງອີງເງິນກີບທຽບເງິນໂດລາ ປະຈຳວັນ ເພື່ອໃຫ້ທະນາຄານທຸລະກິດ ແລະ ຮ້ານແລກປ່ຽນເງິນຕາ ປະຕິບັດໃນຂອບເຂດ ±0,25% ແລະ ກຳນົດສ່ວນຕ່າງລະຫວ່າງອັດຕາຊື້-ຂາຍ ສຳລັບເງິນກີບທຽບເງິນເອີໂຣ 0,50%, ເງິນກີບທຽບເງິນບາດ 0,75% ແລະ 2% ສຳລັບເງິນກີບທຽບສະກຸນເງິນຕາອື່ນໆ.

ຜ່ານການຈັດຕັ້ງປະຕິບັດບັນດາມາດຕະການອັດຕາແລກປ່ຽນຄືດັ່ງກ່າວນັ້ນ, ອັດຕາແລກປ່ຽນມີການເໜັງຕີງຄື: ອັດຕາແລກປ່ຽນສະເລ່ຍທົ່ວລະບົບ ເງິນກີບທຽບເງິນໂດລາອ່ອນຄ່າ 1,99%, ຢູ່ໃນລະດັບ 9.496,18 ກີບ/ໂດລາ ແລະ ເງິນກີບທຽບເງິນບາດອ່ອນຄ່າ 4,63%, ຢູ່ໃນລະດັບ 318,17 ກີບ/ບາດ.

**ຮູບທີ 5. ການເໜັງຕີງຂອງອັດຕາແລກປ່ຽນ (ໄຕມາດທຽບໄຕມາດ)**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.5. ການຄຸ້ມຄອງທະນາຄານທຸລະກິດ ແລະ ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ

ຮອດທ້າຍໄຕມາດ 3 ຂອງປີ 2020, ທະນາຄານທຸລະກິດ ມີຈຳນວນທັງໝົດ 44 ທະນາຄານ[1] (ຕາຕະລາງທີ 15). ໃນນັ້ນ, ທົ່ວລະບົບທະນາຄານທຸລະກິດ ມີຍອດຊັບສິນທັງໝົດ 160.161,76 ຕື້ກີບ, ເພີ່ມຂຶ້ນ 4,49%; ຍອດເງິນຝາກທັງໝົດ (ບໍ່ລວມເງິນຝາກຂອງບຸກຄົນບໍ່ຕັ້ງຖິ່ນຖານຢູ່ລາວ) 98.853,68 ຕື້ກີບ, ເພີ່ມຂຶ້ນ 5,60%. ໃນໄລຍະ 3 ເດືອນຜ່ານມາ, ທະນາຄານທຸລະກິດໄດ້ປະກອບສ່ວນຊຸກຍູ້ເສດຖະກິດໃຫ້ຂະຫຍາຍຕົວ ໃນນັ້ນ, ສິນເຊື່ອໃຫ້ພາກສ່ວນເສດຖະກິດ ມີຍອດທັງໝົດ 76.815,55 ຕື້ກີບ, ຂະຫຍາຍຕົວ 0,70%. ຄຽງຄູ່ກັນນັ້ນ, ສະຖາບັນການເງິນທີ່ບໍ່ແມ່ນທະນາຄານ ທີ່ໄດ້ຮັບອະນຸຍາດຈາກ ທຫລ ມີທັງໝົດ 183 ແຫ່ງ[2], ເພີ່ມຂຶ້ນ 3 ແຫ່ງ.

## 3.6. ອັດຕາດອກເບ້ຍ

ໃນໄຕມາດນີ້, ອັດຕາດອກເບ້ຍເງິນຝາກ ແລະ ເງິນກູ້ຂອງທະນາຄານທຸລະກິດ ໂດຍລວມຢູ່ໃນລະດັບເດີມ. ໃນນີ້, ອັດຕາດອກເບ້ຍເງິນຝາກມີກຳນົດ 12 ເດືອນ ສະກຸນເງິນກີບ ຢູ່ໃນລະຫວ່າງ 3,00-6,00% ຕໍ່ປີ, ສະກຸນເງິນບາດ 0,60-6,00% ຕໍ່ປີ ແລະ ສະກຸນເງິນໂດລາ 0,70-6,25% ຕໍ່ປີ. ສໍາລັບອັດຕາດອກເບ້ຍເງິນກູ້ຂອງ ທທກ ໄລຍະສັ້ນ ຂອງລູກຄ້າຊັ້ນດີ ສະກຸນເງິນກີບ ຢູ່ໃນລະຫວ່າງ 5,25-14,00% ຕໍ່ປີ, ສະກຸນເງິນບາດ 4,29-13,00% ຕໍ່ປີ ແລະ ສະກຸນເງິນໂດລາ 4,00-12,00% ຕໍ່ປີ.

## 3.7. ເງິນຝາກ

ເງິນຝາກຂອງທະນາຄານທຸລະກິດ (ບໍ່ລວມເງິນຝາກຂອງຜູ້ທີ່ບໍ່ຕັ້ງຖິ່ນຖານຢູ່ ສປປ ລາວ) ມີຍອດທັງໝົດ 98.853,68 ຕື້ກີບ, ເພີ່ມຂຶ້ນ 5,60% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 18,87% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ໃນນີ້, ເງິນຝາກເປັນສະກຸນເງິນກີບ ເພີ່ມຂຶ້ນ 3,15%, ກວມເອົາ 45,09% ຂອງເງິນຝາກທັງໝົດ ແລະ ເງິນຝາກເປັນສະກຸນເງິນຕາຕ່າງປະເທດ ເພີ່ມຂຶ້ນ 7,71%, ກວມເອົາ 54,91% ຂອງເງິນຝາກທັງໝົດ.

---

[1] ໃນນັ້ນ, ມີ 115 ສາຂາ, 539 ໜ່ວຍບໍລິການ, 42 ໜ່ວຍແລກປ່ຽນເງິນຕາ ແລະ ຕູ້ ATM 1.324 ໜ່ວຍ.

[2] ໃນນັ້ນ, ສະຖາບັນການເງິນທີ່ຮັບຝາກ 20 ແຫ່ງ, ສະຖາບັນການເງິນທີ່ບໍ່ຮັບຝາກ 79 ແຫ່ງ, ສະຫະກອນສິນເຊື່ອ ແລະ ເງິນຝາກປະຢັດ 26 ແຫ່ງ, ບໍລິສັດເຊົ່າສິນເຊື່ອ 29 ແຫ່ງ ແລະ ໂຮງຊວດຈໍາ 29 ແຫ່ງ.

**ຮູບທີ 6. ເງິນຝາກຂອງທະນາຄານທຸລະກິດ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.8. ສິນເຊື່ອ

ສິນເຊື່ອຂອງທະນາຄານທຸລະກິດ ຮອດທ້າຍໄຕມາດ 3 ຂອງປີ 2020 ມີຍອດທັງໝົດ 76.815,55 ຕື້ກີບ, ຂະຫຍາຍຕົວຢູ່ໃນລະດັບ 0,70% ທຽບໃສ່ໄຕມາດຜ່ານມາ ແລະ 6,19% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ໃນນີ້, ສິນເຊື່ອທີ່ຂະຫຍາຍຕົວຫຼາຍກວ່າໝູ່ແມ່ນ ຂະແໜງຂົນສົ່ງ 21,15%, ຂະແໜງການບໍລິການ 2,76%, ຂະແໜງການຄ້າ 1,60%, ຂະແໜງການອື່ນໆ 1,12%, ຂະແໜງກະສິກຳ 1,00% ແລະ ຂະແໜງອຸດສາຫະກຳ 0,24%. ໃນຂະນະດຽວກັນ, ສິນເຊື່ອບາງຂະແໜງການຫຼຸດລົງ ເປັນຕົ້ນແມ່ນ ຂະແໜງການກໍ່ສ້າງ 3,38%, ຂະແໜງຫັດຖະກຳ 2,91 ແລະ ຂະແໜງສະໜອງວັດຖຸ ແລະ ເຕັກນິກ 0,09%.

**ຮູບທີ 7. ການປະກອບສ່ວນຂອງສິນເຊື່ອ (ແຍກຕາມຂະແໜງການ)**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 3.9. ຕະຫຼາດຫຼັກຊັບ

ໃນໄຕມາດທີ 3 ຂອງປີ 2020, ດັດຊະນີຕະຫຼາດຫຼັກຊັບລາວປິດຢູ່ທີ່ 597,54 ຈຸດ, ຫຼຸດລົງ 2,99% ທຽບໃສ່ໄຕມາດຜ່ານມາ ແລະ ຫຼຸດລົງ 17,93% ທຽບໃສ່ດັດຊະນີທ້າຍປີຜ່ານມາ; ມີປະລິມານການຊື້-ຂາຍຮຸ້ນທັງ

ໝົດ 9,84 ລ້ານຮຸ້ນ ແລະ ມີມູນຄ່າການຊື້-ຂາຍທັງໝົດ 27,79 ຕື້ກີບ, ເພີ່ມຂຶ້ນ 70,91% ທຽບໃສ່ໄຕມາດຜ່ານມາ. ໃນນັ້ນ, ມູນຄ່າການຊື້-ຂາຍຮຸ້ນຂອງນັກລົງທຶນຕ່າງປະເທດ ກວມອັດຕາສ່ວນ 76,69% ຂອງມູນຄ່າການຊື້-ຂາຍຮຸ້ນທັງໝົດ. ສາເຫດທີ່ມູນຄ່າຊື້-ຂາຍຮຸ້ນທັງໝົດ ເພີ່ມຂຶ້ນໃນໄຕມາດນີ້ ຕົ້ນຕໍແມ່ນມາຈາກການເພີ່ມຂຶ້ນຂອງການຊື້-ຂາຍຮຸ້ນຂອງບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ (EDL-Gen) ຊຶ່ງສ່ວນໃຫຍ່ແມ່ນການຊື້-ຂາຍຮຸ້ນຂອງນັກລົງທຶນຕ່າງປະເທດດ້ວຍກັນເອງ.

**ສະພາບການຊື້-ຂາຍຮຸ້ນຂອງຕະຫຼາດຫຼັກຊັບລາວ (LSX)**

| ຊື່ບໍລິສັດ | ໄຕມາດ 3/2020 | | | ໄຕມາດ 2/2020 | | | % ການປ່ຽນແປງ | | |
|---|---|---|---|---|---|---|---|---|---|
| | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາປິດ | ຈຳນວນ (ຮຸ້ນ) | ມູນຄ່າການຊື້-ຂາຍ (ກີບ) | ລາຄາປິດ | ຈຳນວນ | ມູນຄ່າການຊື້-ຂາຍ | ລາຄາ |
| **ດັດຊະນີປິດ** | | **597,54** | | | **580,16** | | | | **2,99** |
| ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ | 1.242.300 | 6.959.135.000 | 5.650 | 1.850.700 | 10.581.145.000 | 5.650 | -32,87 | -34,23 | - |
| ບໍລິສັດ ຜະລິດໄຟຟ້າລາວ ມະຫາຊົນ | 8.395.900 | 20.396.188.000 | 2.490 | 1.185.100 | 2.958.499.000 | 2.350 | 608,45 | 589,41 | 5,96 |
| ບໍລິສັດ ລາວເວີນ ມະຫາຊົນ | 100 | 1.030.000 | 10.300 | 200 | 2.045.000 | 10.700 | -50,00 | -49,63 | -3,74 |
| ບໍລິສັດ ປີໂຕຣລ້ຽມເທຣດດິ້ງລາວ ມະຫາຊົນ | 36.500 | 15.837.000 | 425 | 5.034.100 | 2.491.937.000 | 450 | -99,27 | -99,36 | -5,56 |
| ບໍລິສັດ ສູວັນນີ ໂຮມເຊັນເຕີ ມະຫາຊົນ | 15.900 | 29.117.000 | 1.830 | 52.700 | 120.905.000 | 2.300 | -69,83 | -75,92 | -20,43 |
| ບໍລິສັດ ພູສີກໍ່ສ້າງ ແລະ ພັດທະນາ ມະຫາຊົນ | 7.700 | 7.629.500 | 1.000 | 3.600 | 2.275.000 | 900 | 113,89 | 235,36 | 11,11 |
| ບໍລິສັດ ຊີມັງລາວ ມະຫາຊົນ | 3.000 | 2.718.000 | 990 | 14.000 | 24.142.000 | 1.750 | -78,57 | -88,74 | -43,43 |
| ບໍລິສັດ ມະຫາທຶນເຊົ່າສິນເຊື່ອ ມະຫາຊົນ | 113.100 | 318.477.000 | 2.800 | 16.900 | 48.192.000 | 2.900 | 569,23 | 560,85 | -3,45 |
| ບໍລິສັດ ລາວອາໂກຣເທັກ ມະຫາຊົນ | 3.700 | 3.516.000 | 950 | 10.000 | 8.700.000 | 870 | -63,00 | -59,59 | 9,20 |
| ບໍລິສັດ ວຽງຈັນເຊັນເຕີ ລາວ ມະຫາຊົນ | 2.800 | 3.090.000 | 1.100 | 9.800 | 12.040.000 | 1.150 | -71,43 | -74,34 | -4,35 |
| ບໍລິສັດ ລາວອາຊຽນເຊົ່າສິນເຊື່ອ ມະຫາຊົນ | 25.100 | 54.830.000 | 2.450 | 4.800 | 10.857.000 | 2.220 | 422,92 | 405,02 | 10,36 |
| **ທັງໝົດ** | **9.846.100** | **27.791.567.500** | | **8.181.900** | **16.260.737.000** | | **20,34** | **70,91** | |

**ແຫຼ່ງຂໍ້ມູນ:** ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ, ທະນາຄານແຫ່ງ ສປປ ລາວ.

# IV. ດຸນການຊຳລະກັບຕ່າງປະເທດ

## 4.1. ດຸນການຊຳລະລວມ

ດຸນຊຳລະກັບຕ່າງປະເທດ ປະຈຳໄຕມາດ 3 ຂອງປີ 2020, ດຸນການຊຳລະລວມ ເກີນດຸນ 487,55 ລ້ານໂດລາ. ໃນນັ້ນ, ດຸນບັນຊີຊຳລະປົກກະຕິ ເກີນດຸນ 202,52 ລ້ານໂດລາ ແລະ ດຸນບັນຊີການເງິນ ມີກະແສເງິນໄຫຼເຂົ້າສຸດທິ 384,71 ລ້ານໂດລາ. ຄັງສຳຮອງເງິນຕາຕ່າງປະເທດ ສາມາດກຸ້ມການນຳເຂົ້າສິນຄ້າໄດ້ 4,93 ເດືອນ[3].

**ຮູບທີ 8. ດຸນການຊຳລະກັບຕ່າງປະເທດ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 4.2. ດຸນບັນຊີຊຳລະປົກກະຕິ

ດຸນບັນຊີຊຳລະປົກກະຕິ ເກີນດຸນຢູ່ໃນລະດັບ 202,52 ລ້ານໂດລາ ຈາກຂາດດຸນ 143,15 ລ້ານໂດລາ ໃນໄຕມາດຜ່ານມາ. ສາເຫດຕົ້ນຕໍແມ່ນຍ້ອນດຸນການຄ້າ ເກີນດຸນ 312,66 ລ້ານໂດລາ.

**ຮູບທີ 9. ໂຄງປະກອບຂອງດຸນບັນຊີຊຳລະປົກກະຕິ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

[3] ມູນຄ່າສິນຄ້ານຳເຂົ້າສະເລ່ຍຕໍ່ເດືອນໃນປີ 2020 ແມ່ນນຳໃຊ້ 274,04 ລ້ານໂດລາ (ຕົວເລກຄາດຄະເນ) ຊຶ່ງບໍ່ລວມການນຳເຂົ້າສິນຄ້າທີ່ມີແຫຼ່ງທຶນຮອງຮັບຢູ່ຕ່າງປະເທດ. ໃນນັ້ນ, ລວມມີສິນຄ້າທີ່ໄດ້ຮັບນະໂຍບາຍການສົ່ງເສີມການລົງທຶນ ປະກອບດ້ວຍລະຫັດເສຍພາສີຫຼຸດຜ່ອນຕາມນະໂຍບາຍສົ່ງເສີມການລົງທຶນ; ເສຍພາສີ, ຍົກເວັ້ນອາກອນ ແລະ ພັນທະອື່ນໆ ຕາມກົດໝາຍສົ່ງເສີມການລົງທຶນ; ຍົກເວັ້ນອາກອນມູນຄ່າເພີ່ມ, ເສຍພາສີ ແລະ ພັນທະອື່ນໆ ຕາມກົດໝາຍສົ່ງເສີມລົງທຶນ ແລະ ອື່ນໆ.

### 4.2.1 ດຸນການຄ້າ

ໃນໄຕມາດນີ້, ດຸນການຄ້າ ເກີນດຸນ 312,66 ລ້ານໂດລາ ຈາກຂາດດຸນ 3,18 ລ້ານໂດລາ ໃນໄຕມາດຜ່ານມາ. ສາເຫດຍ້ອນການສົ່ງອອກສິນຄ້າ ເພີ່ມຂຶ້ນ 26,88% ຈາກຫຼຸດລົງ 21,03% ໃນໄຕມາດຜ່ານມາ ບວກກັບການນໍາເຂົ້າສິນຄ້າ ທີ່ເພີ່ມຂຶ້ນພຽງເລັກນ້ອຍ ຈາກໄຕມາດຜ່ານມາ.

**ການສົ່ງອອກສິນຄ້າ:** ມີມູນຄ່າ 1.558,62 ລ້ານໂດລາ, ເພີ່ມຂຶ້ນ 26,88% ທຽບໃສ່ໄຕມາດຜ່ານມາ ແລະ ເພີ່ມຂຶ້ນ 5,82% ທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສາເຫດທີ່ເຮັດໃຫ້ການສົ່ງອອກເພີ່ມຂຶ້ນ ແມ່ນມາຈາກການເພີ່ມຂຶ້ນຂອງການສົ່ງອອກຜະລິດຕະພັນບໍ່ແຮ່; ຜະລິດຕະພັນພະລາສະຕິກ ແລະ ຢາງພາລາ; ກະແສໄຟຟ້າ; ເຄື່ອງໄຟຟ້າ ແລະ ອຸປະກອນເຄື່ອງໃຊ້ໄຟຟ້າອື່ນໆ; ຜະລິດຕະພັນຕັດຫຍິບ ແລະ ເຄື່ອງຫັດຖະກໍາ. ສິນຄ້າສົ່ງອອກຫຼັກ ປະກອບມີ ກະແສໄຟຟ້າ ກວມເອົາ 29,18%; ຮອງລົງມາແມ່ນຜະລິດຕະພັນບໍ່ແຮ່ ກວມເອົາ 27,92%; ຜະລິດຕະພັນກະສິກໍາ ກວມເອົາ 7,34%; ຜະລິດຕະພັນໄມ້, ເຍື່ອໄມ້ ແລະ ເຈ້ຍ ກວມເອົາ 5,70%; ຜະລິດຕະພັນພະລາສະຕິກ ແລະ ຢາງພາລາ ກວມເອົາ 5,51%; ຜະລິດຕະພັນຈາກສັດ ກວມເອົາ 5.43% ແລະ ອາຫານປຸງແຕ່ງ, ເຄື່ອງດື່ມ ແລະ ຢາສູບ ກວມເອົາ 4,78% ຂອງການສົ່ງອອກທັງໝົດ.

**ຮູບທີ 10. ການສົ່ງອອກສິນຄ້າ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

**ການນໍາເຂົ້າສິນຄ້າ:** ມີມູນຄ່າ 1.245,96 ລ້ານໂດລາ, ເພີ່ມຂຶ້ນ 1,17% ທຽບໃສ່ໄຕມາດຜ່ານມາ, ແຕ່ຫຼຸດລົງ 14,08% ເມື່ອທຽບໃສ່ໄລຍະດຽວກັນຂອງປີຜ່ານມາ. ສິນຄ້ານໍາເຂົ້າເພີ່ມຂຶ້ນໃນໄຕມາດນີ້ ແມ່ນປະເພດເຄື່ອງຈັກ ແລະ ອຸປະກອນ; ຍານພະຫະນະ ແລະ ອຸປະກອນກ່ຽວຂ້ອງ; ຜະລິດຕະພັນໄມ້, ເຍື່ອໄມ້ ແລະ ເຈ້ຍ ແລະ ຜະລິດຕະພັນພະລາສະຕິກ ແລະ ຢາງພາລາ. ສິນຄ້ານໍາເຂົ້າຫຼັກ ໄດ້ແກ່ ປະເພດອາຫານ, ເຄື່ອງດື່ມ, ຢາ ແລະ ເຄື່ອງໃຊ້ສອຍທົ່ວໄປ ກວມເອົາ 13,04%; ຮອງລົງມາແມ່ນ ເຄື່ອງໄຟ້ຟ້າ ແລະ ອຸປະກອນເຄື່ອງໃຊ້ໄຟຟ້າອື່ນໆ ກວມເອົາ 11.81%; ເຄື່ອງຈັກ ແລະ ອຸປະກອນ ກວມເອົາ 11,80%; ນໍ້າມັນດິບ, ນໍ້າມັນເຊື້ອໄຟ, ນໍ້າມັນເຄື່ອງ ແລະ ອື່ນໆ ກວມເອົາ 10,66% ແລະ ເຫຼັກເສັ້ນ, ເຫຼັກແຜ່ນ ແລະ ໂລຫະອື່ນໆ ກວມເອົາ 10,09% ຂອງການນໍາເຂົ້າທັງໝົດ.

**ຮູບທີ 11. ການນຳເຂົ້າສິນຄ້າ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## 4.3. ດຸນບັນຊີການເງິນ

ດຸນບັນຊີການເງິນ ມີກະແສເງິນໄຫຼເຂົ້າ (ສຸດທິ) 384,71 ລ້ານໂດລາ, ເພີ່ມຂຶ້ນຈາກ 10,73 ໃນໄຕມາດຜ່ານມາ. ສາເຫດຕົ້ນຕໍແມ່ນຍ້ອນກະແສເງິນລົງທຶນໂດຍກົງຈາກຕ່າງປະເທດ ໄຫຼເຂົ້າສຸດທິ ໃນຂະແໜງການກໍ່ສ້າງເພີ່ມຂຶ້ນ. ພ້ອມດຽວກັນນີ້, ກະແສເງິນລົງທຶນອື່ນໆ ມີກະແສເງິນໄຫຼເຂົ້າສຸດທິ ເພີ່ມຂຶ້ນ ຍ້ອນກະແສເງິນກູ້ຢືມຈາກຕ່າງປະເທດຂອງລັດຖະບານ ແລະ ຫົວໜ່ວຍທຸລະກິດ ໄຫຼເຂົ້າສຸດທິ ເພີ່ມຂຶ້ນ.

**ຮູບທີ 12. ດຸນບັນຊີການເງິນ**




**ແຫຼ່ງຂໍ້ມູນ:** ທະນາຄານແຫ່ງ ສປປ ລາວ.

## ຕາຕະລາງທີ 1. ດັດຊະນີລາຄາຜູ້ຊົມໃຊ້ (ທຽບຖານເດືອນ 12/2015 = 100)

| ໝວດສິນຄ້າ | ໄຕມາດ 3/2019 | ໄຕມາດ 4/2019 | ໄຕມາດ 1/2020 | ໄຕມາດ 2/2020 | ໄຕມາດ 3/2020 |
|---|---|---|---|---|---|
| **ດັດຊະນີລາຄາຜູ້ຊົມໃຊ້ລວມ** | **108,66** | **110,81** | **111,61** | **112,30** | **114,30** |
| **ດັດຊະນີແຕ່ລະໝວດສິນຄ້າ** | | | | | |
| 1. ໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ແມ່ນເຫຼົ້າ | 110,42 | 114,10 | 114,64 | 117,50 | 120,12 |
| 2. ໝວດເຫຼົ້າ ແລະ ຢາສູບ | 105,36 | 105,43 | 106,20 | 105,66 | 106,04 |
| 3. ໝວດເຄື່ອງນຸ່ງຮົ່ມ ແລະ ເກີບ | 112,40 | 113,41 | 116,18 | 116,56 | 117,82 |
| 4. ໝວດທີ່ພັກອາໃສ, ນໍ້າປະປາ, ໄຟຟ້າ ແລະ ເຊື້ອເພີງ | 104,85 | 105,05 | 105,45 | 104,85 | 105,50 |
| 5. ໝວດເຄື່ອງໃຊ້ໃນເຮືອນ | 105,40 | 106,39 | 109,09 | 109,58 | 110,69 |
| 6. ໝວດການຮັກສາສຸຂະພາບ | 104,08 | 104,56 | 106,90 | 108,98 | 110,12 |
| 7. ໝວດຄົມມະນາຄົມ ແລະ ການຂົນສົ່ງ | 109,54 | 109,95 | 110,89 | 108,78 | 110,74 |
| 8. ໝວດໄປສະນີ ແລະ ໂທລະຄົມມະນາຄົມ | 103,66 | 104,73 | 109,03 | 103,10 | 108,97 |
| 9. ໝວດການບັນເທີງ ແລະ ການພັກຜ່ອນ | 103,20 | 103,53 | 104,15 | 103,89 | 104,25 |
| 10. ໝວດການສຶກສາ | 102,27 | 103,00 | 103,30 | 101,62 | 102,93 |
| 11. ໝວດຮ້ານອາຫານ ແລະ ໂຮງແຮມ | 106,81 | 106,67 | 107,17 | 105,40 | 104,82 |
| 12. ໝວດສິນຄ້າ ແລະ ການບໍລິການອື່ນໆ | 107,19 | 108,85 | 111,63 | 113,05 | 118,18 |

**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

## ຕາຕະລາງທີ 2. ອັດຕາເງິນເຟີ້ (%)

| ໝວດສິນຄ້າ | ໄຕມາດ 3/2019 | ໄຕມາດ 4/2019 | ໄຕມາດ 1/2020 | ໄຕມາດ 2/2020 | ໄຕມາດ 3/2020 |
|---|---|---|---|---|---|
| **ອັດຕາເງິນເຟີ້** | **3,42** | **5,85** | **6,44** | **5,53** | **5,19** |
| 1. ໝວດສະບຽງອາຫານ ແລະ ເຄື່ອງດື່ມບໍ່ແມ່ນເຫຼົ້າ | 4,98 | 9,76 | 10,24 | 10,53 | 8,79 |
| 2. ໝວດເຫຼົ້າ ແລະ ຢາສູບ | 3,11 | 2,49 | 2,41 | 0,66 | 0,64 |
| 3. ໝວດເຄື່ອງນຸ່ງຮົ່ມ ແລະ ເກີບ | 2,64 | 3,10 | 4,83 | 4,63 | 4,82 |
| 4. ໝວດທີ່ພັກອາໃສ, ນໍ້າປະປາ, ໄຟຟ້າ ແລະ ເຊື້ອເພີງ | 0,67 | 0,80 | 0,99 | 0,06 | 0,62 |
| 5. ໝວດເຄື່ອງໃຊ້ໃນເຮືອນ | 2,14 | 3,01 | 4,93 | 4,70 | 5,02 |
| 6. ໝວດການຮັກສາສຸຂະພາບ | 1,72 | 1,66 | 3,63 | 5,28 | 5,80 |
| 7. ໝວດຄົມມະນາຄົມ ແລະ ການຂົນສົ່ງ | 1,83 | 1,58 | 3,07 | -0,12 | 1,09 |
| 8. ໝວດໄປສະນີ ແລະ ໂທລະຄົມມະນາຄົມ | 1,94 | 2,75 | 6,27 | 0,00 | 5,12 |
| 9. ໝວດການບັນເທີງ ແລະ ການພັກຜ່ອນ | 2,96 | 3,27 | 3,04 | 1,93 | 1,02 |
| 10. ໝວດການສຶກສາ | 1,23 | 1,72 | 1,94 | 0,27 | 0,65 |
| 11. ໝວດຮ້ານອາຫານ ແລະ ໂຮງແຮມ | 2,16 | 1,98 | 1,66 | -1,22 | -1,86 |
| 12. ໝວດສິນຄ້າ ແລະ ການບໍລິການອື່ນໆ | 3,97 | 5,09 | 6,70 | 7,43 | 10,26 |

**ແຫຼ່ງຂໍ້ມູນ:** ສູນສະຖິຕິແຫ່ງຊາດ, ກະຊວງແຜນການ ແລະ ການລົງທຶນ.

# ຕາຕະລາງທີ 3. ຖານະການເງິນຂອງທະນາຄານແຫ່ງ ສປປ ລາວ (ຕື້ກີບ)

| ລາຍການ | ໄຕມາດ 3/2019 | ໄຕມາດ 4/2019 | ໄຕມາດ 1/2020 | ໄຕມາດ 2/2020 | ໄຕມາດ 3/2020 |
|---|---|---|---|---|---|
| **ຊັບສິນຕ່າງປະເທດສຸດທິ** | **6.571,35** | **8.224,86** | **8.359,95** | **7.172,14** | **11.813,11** |
| ຊັບສິນຕ່າງປະເທດ | 7.187,81 | 8.853,58 | 8.987,64 | 7.810,68 | 12.478,44 |
| ໜີ້ສິນຕ່າງປະເທດ | -616,46 | -628,72 | -627,69 | -638,54 | -665,33 |
| **ຊັບສິນພາຍໃນສຸດທິ** | **18.656,57** | **19.100,40** | **20.476,62** | **22.696,78** | **19.362,00** |
| **ສິນເຊື່ອພາຍໃນສຸດທິ** | **13.664,32** | **14.199,58** | **15.596,54** | **17.508,54** | **16.323,24** |
| ສິນເຊື່ອໃຫ້ລັດຖະບານສຸດທິ | 335,39 | 839,17 | 2.207,44 | 3.948,30 | 2.013,47 |
| ສິນເຊື່ອໃຫ້ລັດຖະບານ | 2.746,82 | 2.746,82 | 4.793,96 | 4.793,96 | 4.793,96 |
| ເງິນຝາກລັດຖະບານ | -2.411,43 | -1.907,65 | -2.586,52 | -845,66 | -2.780,49 |
| ສິນເຊື່ອໃຫ້ພາກສ່ວນເສດຖະກິດ | 6.359,29 | 6.379,03 | 6.117,29 | 6.141,43 | 6.217,41 |
| ສິນເຊື່ອໃຫ້ລັດວິສາຫະກິດ | 6.359,29 | 6.379,03 | 6.117,29 | 6.141,43 | 6.217,41 |
| ສິນເຊື່ອໃຫ້ສະຖາບັນການເງິນ | 6.969,64 | 6.981,39 | 7.271,81 | 7.418,81 | 8.092,37 |
| ພັນທະບັດທະນາຄານກາງ | -2.593,96 | -2.886,41 | -2.920,64 | -2.951,34 | -2.408,17 |
| ລາຍການອື່ນໆສຸດທິ | 7.586,21 | 7.787,22 | 7.800,72 | 8.139,58 | 5.446,93 |
| **ຖານເງິນຕາ** | **25.227,92** | **27.325,26** | **28.836,57** | **29.868,92** | **31.175,11** |
| ເງິນສົດຢູ່ຂອດຈໍລະຈອນ | 9.778,70 | 10.990,13 | 11.145,67 | 10.764,38 | 10.668,23 |
| ເງິນຝາກ | 15.449,22 | 16.335,13 | 17.690,90 | 19.104,54 | 20.506,88 |
| ເງິນຝາກກະແສລາຍວັນ | 11.418,89 | 11.895,26 | 12.844,86 | 15.031,81 | 16.129,43 |
| ເງິນແຮຝາກບັງຄັບ | 3.853,85 | 3.860,49 | 4.166,80 | 3.794,60 | 3.956,89 |
| ທຶນຈົດທະບຽນຂອງ ທທກ | 110,77 | 534,53 | 647,26 | 262,43 | 384,68 |
| ເງິນຝາກຂອງພາກສ່ວນອື່ນໆ | 65,71 | 44,85 | 31,98 | 15,70 | 35,88 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

## ຕາຕະລາງທີ 4. ຖານະການເງິນຂອງທະນາຄານທຸລະກິດ (ຕື້ກີບ)

| ລາຍການ | ໄຕມາດ 3/2019 | ໄຕມາດ 4/2019 | ໄຕມາດ 1/2020 | ໄຕມາດ 2/2020 | ໄຕມາດ 3/2020 |
|---|---|---|---|---|---|
| **ຊັບສິນຕ່າງປະເທດສຸດທິ** | **-13.495,34** | **-15.485,24** | **-16.108,99** | **-15.648,72** | **-14.000,37** |
| ຊັບສິນຕ່າງປະເທດ | 12.756,84 | 11.915,42 | 12.467,04 | 13.328,96 | 14.630,36 |
| ໜີ້ສິນຕ່າງປະເທດ | -26.252,18 | -27.400,66 | -28.576,03 | -28.977,68 | -28.630,73 |
| **ຄັງສະສົມສຸດທິ** | **25.521,89** | **28.894,61** | **32.108,98** | **33.693,52** | **36.482,31** |
| ຄັງສະສົມ | 31.791,24 | 34.261,18 | 37.372,67 | 38.925,43 | 42.008,64 |
| ເງິນກູ້ຢືມຈາກ ທຫລ | -6.269,34 | -5.366,57 | -5.263,69 | -5.231,91 | -5.526,33 |
| **ສິນເຊື່ອໃຫ້ລັດຖະບານສຸດທິ** | **3.674,29** | **3.747,83** | **3.163,02** | **3.330,09** | **3.564,98** |
| ເປັນສະກຸນເງິນກີບ | 4.113,32 | 4.496,28 | 3.845,13 | 4.016,48 | 4.317,23 |
| ເປັນສະກຸນເງິນຕາຕ່າງປະເທດ | -439,03 | -748,45 | -682,10 | -686,40 | -752,26 |
| **ຊັບສິນພາຍໃນສຸດທິ (ຍົກເວັ້ນສິນເຊື່ອໃຫ້ລັດຖະບານ)** | **67.460,22** | **70.402,92** | **71.204,41** | **72.234,27** | **72.806,76** |
| ສິນເຊື່ອໃຫ້ພາກສ່ວນເສດຖະກິດ | 72.339,03 | 74.628,28 | 75.279,63 | 76.284,50 | 76.815,55 |
| ເປັນສະກຸນເງິນຕາຕ່າງປະເທດ | 37.275,63 | 38.686,21 | 38.945,77 | 39.701,77 | 39.548,80 |
| ສິນເຊື່ອໃຫ້ພາກເອກະຊົນ | 66.303,46 | 68.543,63 | 69.399,41 | 70.390,22 | 70.878,69 |
| ເປັນສະກຸນເງິນຕາຕ່າງປະເທດ | 31.579,84 | 32.994,90 | 33.463,57 | 34.195,07 | 34.010,44 |
| ສິນເຊື່ອໃຫ້ພາກສ່ວນລັດວິສາຫະກິດ | 6.035,57 | 6.084,65 | 5.880,22 | 5.894,28 | 5.936,86 |
| ເປັນສະກຸນເງິນຕາຕ່າງປະເທດ | 5.695,79 | 5.691,32 | 5.482,20 | 5.506,70 | 5.538,37 |
| **ຊັບສິນອື່ນໆສຸດທິ** | **-4.878,81** | **-4.225,36** | **-4.075,22** | **-4.050,23** | **-4.008,79** |
| **ເງິນຝາກລູກຄ້າ** | **83.161,05** | **87.560,12** | **90.367,43** | **93.609,16** | **98.853,68** |
| ເປັນເງິນກີບ | 37.960,01 | 40.090,21 | 42.060,45 | 43.215,52 | 44.575,73 |
| ເປັນສະກຸນເງິນຕາຕ່າງປະເທດ | 45.201,05 | 47.469,91 | 48.306,98 | 50.393,64 | 54.277,95 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

## ຕາຕະລາງທີ 5. ຖານະການເງິນຂອງລະບົບທະນາຄານ (ຕື້ກີບ)

| ລາຍການ | ໄຕມາດ 3/2019 | ໄຕມາດ 4/2019 | ໄຕມາດ 1/2020 | ໄຕມາດ 2/2020 | ໄຕມາດ 3/2020 |
|---|---|---|---|---|---|
| **ຊັບສິນຕ່າງປະເທດສຸດທິ** | **-6.923,99** | **-7.260,38** | **-7.749,04** | **-8.476,58** | **-2.187,26** |
| ຊັບສິນຕ່າງປະເທດ | 19.944,65 | 20.769,00 | 21.454,67 | 21.139,64 | 27.108,80 |
| ໜີ້ສິນຕ່າງປະເທດ | -26.868,64 | -28.029,38 | -29.203,72 | -29.616,22 | -29.296,06 |
| **ຊັບສິນພາຍໃນສຸດທິ** | **97.453,05** | **103.446,72** | **106.743,54** | **110.117,76** | **109.131,90** |
| **ສິນເຊື່ອພາຍໃນ** | **82.707,99** | **85.594,31** | **86.767,39** | **89.704,32** | **88.611,40** |
| ສິນເຊື່ອໃຫ້ລັດຖະບານສຸດທິ | 4.009,68 | 4.587,00 | 5.370,46 | 7.278,39 | 5.578,45 |
| ສິນເຊື່ອໃຫ້ລັດຖະບານ | 8.680,80 | 8.799,27 | 10.506,51 | 10.909,67 | 11.078,05 |
| ເງິນຝາກລັດຖະບານ | -4.671,12 | -4.212,27 | -5.136,05 | -3.631,28 | -5.499,60 |
| ສິນເຊື່ອໃຫ້ພາກສ່ວນເສດຖະກິດ | 78.698,31 | 81.007,30 | 81.396,92 | 82.425,93 | 83.032,96 |
| ສິນເຊື່ອໃຫ້ລັດວິສາຫະກິດ | 12.394,85 | 12.463,67 | 11.997,51 | 12.035,71 | 12.154,27 |
| ສິນເຊື່ອໃຫ້ພາກເອກະຊົນ | 66.303,46 | 68.543,63 | 69.399,41 | 70.390,22 | 70.878,69 |
| ລາຍການອື່ນໆສຸດທິ | 14.745,06 | 17.852,41 | 19.976,15 | 20.413,44 | 20.520,50 |
| **ປະລິມານເງິນຕາມຄວາມໝາຍກວ້າງ** | **90.529,06** | **96.186,33** | **98.994,50** | **101.641,19** | **106.944,64** |
| **ປະລິມານເງິນຄວາມໝາຍແຄບ** | **11.898,25** | **13.785,64** | **14.552,91** | **13.733,74** | **13.825,30** |
| ເງິນຢູ່ນອກລະບົບທະນາຄານ | 7.302,29 | 8.581,37 | 8.595,10 | 8.016,32 | 8.055,09 |
| ເງິນຝາກກະແສລາຍວັນ | 4.595,96 | 5.204,28 | 5.957,81 | 5.717,41 | 5.770,20 |
| **ປະລິມານເງິນປະເພດອື່ນໆ** | **78.630,81** | **82.400,69** | **84.441,58** | **87.907,45** | **93.119,34** |
| ເງິນຝາກປະຢັດ ແລະ ຝາກມີກຳນົດ | 33.429,76 | 34.930,78 | 36.134,60 | 37.513,81 | 38.841,40 |
| ເງິນຝາກເປັນເງິນຕາຕ່າງປະເທດ | 45.201,05 | 47.469,91 | 48.306,98 | 50.393,64 | 54.277,95 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

## ຕາຕະລາງທີ 6. ຊັບສິນຂອງທະນາຄານທຸລະກິດ (ຕື້ກີບ)

| ລາຍການ | ໄຕມາດ 3/2019 | ໄຕມາດ 4/2019 | ໄຕມາດ 1/2020 | ໄຕມາດ 2/2020 | ໄຕມາດ 3/2020 |
|---|---|---|---|---|---|
| ທະນາຄານທຸລະກິດລັດ + ທະນາຄານສະເພາະກິດ | | | | | |
| **ຍອດຊັບສິນ (ຕື້ກີບ)** | **62.558,45** | **63.021,68** | **65.618,51** | **66.311,91** | **69.473,13** |
| ອັດຕາສ່ວນ (%) | 43,75 | 43,14 | 43,58 | 43,26 | 43,38 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 4,35 | 0,74 | 4,12 | 1,06 | 4,77 |
| ທະນາຄານຮ່ວມທຶນ | | | | | |
| **ຍອດຊັບສິນ (ຕື້ກີບ)** | **12.804,00** | **12.803,28** | **13.413,10** | **12.920,25** | **13.937,49** |
| ອັດຕາສ່ວນ (%) | 8,96 | 8,76 | 8,91 | 8,43 | 8,70 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 4,59 | -0,01 | 4,76 | -3,67 | 7,87 |
| ທະນາຄານເອກະຊົນ | | | | | |
| **ຍອດຊັບສິນ (ຕື້ກີບ)** | **26.598,28** | **27.809,28** | **28.343,44** | **29.560,43** | **30.586,26** |
| ອັດຕາສ່ວນ (%) | 18,60 | 19,04 | 18,82 | 19,29 | 19,10 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 5,87 | 4,55 | 1,92 | 4,29 | 3,47 |
| ທະນາຄານສາຂາຕ່າງປະເທດ | | | | | |
| **ຍອດຊັບສິນ (ຕື້ກີບ)** | **41.014,86** | **42.450,80** | **43.199,98** | **44.482,50** | **46.164,89** |
| ອັດຕາສ່ວນ (%) | 28,69 | 29,06 | 28,69 | 29,02 | 28,82 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 3,61 | 3,50 | 1,76 | 2,97 | 3,78 |
| ລວມທັງໝົດ | | | | | |
| **ຍອດຊັບສິນ (ຕື້ກີບ)** | **142.975,59** | **146.085,04** | **150.575,03** | **153.275,08** | **160.161,76** |
| ອັດຕາສ່ວນ (%) | 100,00 | 100,00 | 100,00 | 100,00 | 100,00 |
| ອັດຕາການຂະຫຍາຍຕົວຂອງຊັບສິນ (%) | 4,43 | 2,17 | 3,07 | 1,79 | 4,49 |

**ແຫຼ່ງຂໍ້ມູນ:** ກົມນະໂຍບາຍເງິນຕາ, ທະນາຄານແຫ່ງ ສປປ ລາວ.

# ຕາຕະລາງທີ 7. ອັດຕາແລກປ່ຽນທະນາຄານທຸລະກິດ ແລະ ຕະຫຼາດ

| ໄຕມາດ/ປີ | ກີບ/ໂດລາ | | | ກີບ/ບາດ | | |
|---|---|---|---|---|---|---|
| | ອັດຕາສະເລ່ຍ ທທກ | ອັດຕາສະເລ່ຍ ຕະຫຼາດ | ສະເລ່ຍທົ່ວລະບົບ | ອັດຕາສະເລ່ຍ ທທກ | ອັດຕາສະເລ່ຍ ຕະຫຼາດ | ສະເລ່ຍທົ່ວລະບົບ |
| ໄຕມາດ 3/2012 | 8.013,92 | 8.014,84 | **8.014,38** | 256,16 | 255,85 | **256,01** |
| ໄຕມາດ 4/2012 | 8.000,22 | 8.002,76 | **8.001,49** | 261,22 | 261,09 | **261,16** |
| ໄຕມາດ 1/2013 | 7.897,90 | 7.904,22 | **7.901,06** | 265,12 | 264,92 | **265,02** |
| ໄຕມາດ 2/2013 | 7.692,53 | 7.691,30 | **7.691,92** | 258,72 | 258,50 | **258,61** |
| ໄຕມາດ 3/2013 | 7.815,12 | 7.939,30 | **7.877,21** | 249,97 | 255,04 | **252,51** |
| ໄຕມາດ 4/2013 | 7.935,95 | 8.007,74 | **7.971,84** | 251,61 | 254,01 | **252,81** |
| ໄຕມາດ 1/2014 | 8.029,33 | 8.055,14 | **8.042,23** | 247,44 | 252,11 | **249,77** |
| ໄຕມາດ 2/2014 | 8.050,00 | 8.066,23 | **8.058,11** | 249,75 | 250,83 | **250,29** |
| ໄຕມາດ 3/2014 | 8.043,06 | 8.078,12 | **8.060,59** | 251,60 | 251,70 | **251,65** |
| ໄຕມາດ 4/2014 | 8.059,67 | 8.078,93 | **8.069,30** | 248,51 | 250,67 | **249,59** |
| ໄຕມາດ 1/2015 | 8.108,95 | 8.145,80 | **8.127,37** | 250,30 | 247,48 | **248,89** |
| ໄຕມາດ 2/2015 | 8.104,36 | 8.116,02 | **8.110,19** | 246,78 | 247,77 | **247,28** |
| ໄຕມາດ 3/2015 | 8.160,49 | 8.211,00 | **8.185,74** | 235,57 | 237,05 | **236,31** |
| ໄຕມາດ 4/2015 | 8.151,05 | 8.205,25 | **8.178,15** | 229,52 | 230,24 | **229,88** |
| ໄຕມາດ 1/2016 | 8.134,21 | 8.166,02 | **8.150,12** | 229,75 | 229,77 | **229,76** |
| ໄຕມາດ 2/2016 | 8.113,33 | 8.135,37 | **8.124,35** | 231,50 | 231,89 | **231,70** |
| ໄຕມາດ 3/2016 | 8.095,42 | 8.160,44 | **8.127,93** | 233,80 | 234,49 | **234,15** |
| ໄຕມາດ 4/2016 | 8.160,74 | 8.469,57 | **8.315,16** | 232,39 | 240,13 | **236,26** |
| ໄຕມາດ 1/2017 | 8.194,25 | 8.470,05 | **8.332,15** | 235,14 | 239,73 | **237,44** |
| ໄຕມາດ 2/2017 | 8.213,55 | 8.493,84 | **8.353,69** | 241,47 | 247,01 | **244,24** |
| ໄຕມາດ 3/2017 | 8.278,93 | 8.453,34 | **8.366,13** | 250,05 | 252,90 | **251,47** |
| ໄຕມາດ 4/2017 | 8.300,02 | 8.385,83 | **8.342,93** | 254,03 | 255,60 | **254,81** |
| ໄຕມາດ 1/2018 | 8.286,43 | 8.319,52 | **8.302,97** | 264,16 | 264,54 | **264,35** |
| ໄຕມາດ 2/2018 | 8.340,60 | 8.437,98 | **8.389,29** | 263,72 | 265,60 | **264,66** |
| ໄຕມາດ 3/2018 | 8.469,66 | 8.739,33 | **8.604,49** | 262,42 | 266,26 | **264,34** |
| ໄຕມາດ 4/2018 | 8.532,38 | 8.722,38 | **8.627,38** | 266,66 | 268,15 | **267,41** |
| ໄຕມາດ 1/2019 | 8.563,67 | 8.667,02 | **8.615,35** | 274,51 | 275,58 | **275,05** |
| ໄຕມາດ 2/2019 | 8.623,53 | 8.813,80 | **8.718,66** | 277,24 | 280,17 | **278,71** |
